# ສຶກສາພຶດຕິກຳ ແລະ ການມີສ່ວນຮ່ວມໃນການຈັດກິດຈະກຳການພັດທະນາ ການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2019 - 2020

**ໄມພອນ ອິນວັນຄຳ[1], ຄຳຊາຍ ຈັນທະທິງ, ໄລອ້ອນ ບົ່ມນວນ, ພັນທະມະນັດ ປະທຸມວັນ, ວຽງອານຸສຸກ ອິນທະວົງ**

*ພາກວິຊາຄູພາສາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

[1]***ຕິດຕໍ່ພົວພັນ:*** *ໄມພອນ ອິນວັນຄຳ*[1] *ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, Tel: +856 20 9664 4321, E-mail:* maiphone983@gmail.com

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 08 ມັງກອນ 2023*
*ການປັບປຸງ: 20 ພຶດສະພາ 2023*
*ການຕອບຮັບ: 18 ມິຖຸນາ 2023*

## ບົດຄັດຫຍໍ້

ການວິໄຈຄັ້ງນີ້ ມີຈຸດປະສົງເພື່ອສຶກສາພຶດຕິກຳ ແລະ ການມີສ່ວນຮ່ວມໃນການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ ກຸ່ມເປົ້າໝາຍທີ່ນຳມາຄືຄູສອນທີ່ໂຮງຮຽນມັດທະຍົມສົມບູນໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2019-2020 ມີຈຳນວນ 23 ຄົນ, ຍິງ 13 ຄົນ.

ຜົນການວິໄຈພົບວ່າ: 1) ຄູຜູ້ສອນມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ໂຮງຮຽນມັດທະຍົມສົມບູນເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$=4.09, SD=0.64) ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານຂອງບຸກຄະລາກອນຄູ ຢູ່ໃນລະດັບຫຼາຍໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$=3.96, SD=0.70) ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. 2) ຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານຂອງບຸກຄະລາກອນຄູ ຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$=4.47, SD=0.54). ເມື່ອພິຈາລະນາເປັນດ້ານເຫັນວ່າ: ຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີໃນລະດັບຫຼາຍທີ່ສຸດຕໍ່ດ້ານພຶດຕິກຳການເຂົ້າຮ່ວມກິດຈະກຳມີຄ່າສະເລ່ຍເທົ່າກັບ ($\bar{X}$= 4.54, SD= 0.53), ຮອງລົງມາ ຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີໃນລະດັບຫຼາຍທີ່ສຸດແມ່ນດ້ານແຮງບັນດານໃຈໃນການເຂົ້າຮ່ວມກິດຈະກຳ ມີຄ່າສະເລ່ຍເທົ່າກັບ ($\bar{X}$= 4.51, SD= 0.50), ຮອງລົງມາຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີໃນລະດັບຫຼາຍ ຕໍ່ກັບດ້ານລະດັບຄວາມຮັບຜິດຊອບ, ດ້ານພຶດຕິກຳທີ່ດີຕໍ່ການມີສ່ວນຮ່ວມໃນງານກິດຈະກຳ, ດ້ານພຶດຕິກຳທີ່ດີຕໍ່ການເຂົ້າຮ່ວມກິດຈະກຳ ໂດຍມີຄ່າສະເລ່ຍເທົ່າກັບ (($\bar{X}$= 4.47, SD= 0.54), ($\bar{X}$= 4.43, SD= 0.57), ($\bar{X}$= 4.39, SD= 0.56)) ຕາມລຳດັບ. ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າຜູ້ເຂົ້າຮ່ວມມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ໂຮງຮຽນມັດທະຍົມສົມບູນເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍ, ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

**ຄຳສັບສຳຄັນ:** *ພຶດຕິກຳ, ການມີສ່ວນຮ່ວມກິດຈະກຳ, ພາສາລາວເພື່ອການສື່ສານ*

# Study on Teachers' Behavior and Participation in Developing the Teaching Lao Language for Communication for Teachers in Phonethong District, Luang Prabang Province, Academic Year 2019 - 2020

**Maiphone INVANKHAM [1], Khamxay CHANHTHAHONG, Laion NIMNUAN, Phanthamanath PATHOUMVHANH, Veinganousouk INTHAVONG**

*Department of Language Pedagogy, Faculty of Education, Souphanouvong University, Lao PDR*

[1]***Correspondence:*** *Maiphone INVANKHAM, Faculty of Education, Souphanouvong University, Tel: +856 20 9664 4321, E-mail:* maiphone983@gmail.com

***Article Info:***
*Submitted: Jan 08, 2023*
*Revised: May 20, 2023*
*Accepted: Jun 18, 2023*

**Abstract**

This research aims to examine the teachers' behavior and participation in developing the teaching Lao language for communication for teachers in Phonethong District, Luang Prabang Province, academic year 2019 – 2020. The total number of samples was 23 teachers (13 females), and the research instrument consisted of 2 components - 1) observation form on behavior and involvement of teachers and participants, and 2) questionnaire on participants' behavior. The data was analyzed by using a computer program to find the percentage, mean, and standard deviation.

The result showed that: 1) Teachers generally have positive attitude towards developing the teaching of Lao language for communication for teachers in Phonethong District, Luang Prabang Province which was at a "high" level ($\bar{X}$ = 4.09, SD = 0.64), and it was statistically significant based on the assumptions. The participants also had positive attitude towards developing the teaching of Lao language for communication for teachers in Phonethong District, Luang Prabang Province which was at a "high" level ($\bar{X}$= 3.96, SD = 0.70), and proved to be statistically significant based on the assumptions. 2) The participants had good behavior and involvement towards developing the teaching of Lao language for communication for teachers in Phonethong District, Luang Prabang Province was at a "high" level ($\bar{X}$= 4.47, SD = 0.54). When considering each item, the participants had the highest level of good behavior in terms of behavior ($\bar{X}$= 4.54, SD = 0.53). Secondly, the participants had the highest level of good behavior in the motivation to participate in activities with ($\bar{X}$= 4.51, SD = 0.50), and also participants had a "high" level, in terms of the responsibility, behavioral aspects of participating in activities, Behavioral aspects of attending events activities were at the "high" level (($\bar{X}$= 4.47, SD= 0.54), ($\bar{X}$= 4.43, SD= 0.57), ($\bar{X}$= 4.39, SD= 0.56) respectively). The result shows that the participants had a positive attitude towards developing the teaching of Lao language for communication for teachers in Phonethong District, Luang Prabang Province was at a "high" level, and it was statistically significant based on the assumptions.

**Keywords:** *Behavior, Participation, Lao language for communication*

## 1. ພາກສະເໜີ

ສະພາບການສຶກສາຢູ່ປະເທດເຮົາໃນໄລຍະຜ່ານມາຄື ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍຈົນເຖິງປັດຈຸບັນ ຖື ວ່າ ໄດ້ຮັບການພັດທະນາຢ່າງວ່ອງໄວ, ມີການຂະຫຍາຍຕົວ ບໍ່ຢຸດຢັ້ງ ແລະ ມີປະສິດທິພາບດີຂຶ້ນເທື່ອລະກ້າວເຊິ່ງມັນໄດ້ ສະແດງອອກຢູ່ບ່ອນວ່າ: ລະບົບການສຶກສາແຫ່ງຊາດໄດ້ຮັບ ການເສີມຂະຫຍາຍໃຫ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະ ລິມານ ແລະ ຄຸນະພາບແຕ່ອານຸບານຈົນຮອດມະຫາວິທະຍາ ໄລ, ໄດ້ສົ່ງເສີມວຽກງານການສຶກສາໃຫ້ເປັນຂອງປວງຊົນ, ມາຮອດປັດຈຸບັນສັງຄົມໄດ້ເອົາໃຈໃສ່ປະກອບທຶນຮອນ ເພື່ອພັດທະນາຄຸນະພາບການສຶກສາໃຫ້ມີການປັບປຸງດີຂຶ້ນ ເປັນກ້າວໆ. ໃນການພັດທະນາປະເທດຊາດປັດຈຸບັນພັກ ແລະ ລັດຖະບານເຮົາໄດ້ສຸມໃສ່ຊີ້ນຳການພັດທະນາວັດທະ ນະທຳ-ສັງຄົມ, ຖືເອົາວຽກງານການສຶກສາ ແລະ ການພັດ ທະນາຊັບພະຍາກອນມະນຸດເປັນໃຈກາງສຳຄັນໃນການພັດ ທະນາ, ສົ່ງເສີມສຸຂະພາບໂພສະນາການຂັ້ນພື້ນຖານໃນໂຮງ ຮຽນ ເພື່ອໃຫ້ສອດຄ່ອງກັບການພັດທະນາເສດຖະກິດສັງ ຄົມ ແລະ ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮັບປະກັນໃຫ້ໄດ້ 3 ລັກສະນະຂອງການສຶກສາຄື: ລັກສະ ນະຊາດ, ລັກສະນະວິທະຍາສາດທັນສະໄໝ ແລະ ລັກສະ ນະມະຫາຊົນ ແລະ 5 ຫຼັກມູນຂອງການສຶກສາຄື: ຄຸນສົມ ບັດສຶກສາ, ປັນຍາສຶກສາ, ພະລະສຶກສາ, ສິລະປະສຶກສາ ແລະ ແຮງງານສຶກສາ ຂອງຂະແໜງການສຶກສາ ແລະ ກິລາ (ຄະນະອົບຮົມສູນກາງພັກ, 2012)

ແຜນພັດທະນາສະມັດຖະພາບຂອງຄູ ກະຊວງສຶກ ສາທິການ ປີ 2007 ໄດ້ກ່າວເຖິງສະມັດຖະພາບຂອງຄູ ໃນ 3 ດ້ານ ຄື 1) ຄຸນສົມບັດ ແລະ ຈັນຍາບັນຂອງຄູ, 2) ຄວາມຮູ້ກ່ຽວກັບເດັກ, 3) ຄວາມຮູ້ ແລະຄວາມສາມາດໃນ ການສອນ ເຊິ່ງໃນດ້ານທີ 3 ຄູຄວນປະຕິບັດດັ່ງນີ້ 1) ປະຕິ ບັດຫຼັກສູດແຫ່ງຊາດ, ຮູ້ສ້າງຫຼັກສູດທ້ອງຖິ່ນ ແລະ ຮູ້ຈັດ ກິດຈະກຳທີ່ເໝາະສົມ, 2) ມີຄວາມຮູ້ວິຊາຄູທີ່ໜັກແໜ້ນ ແລະ ມີຄວາມຮູ້ໃນລາຍວິຊາຂອງຕົນ, 3) ຕ້ອງກຳນົດຈຸດປະ ສົງ ຂອງການຮຽນໃຫ້ແທດເໝາະກັບສະພາບຕົວຈິງຂອງ ນັກຮຽນ, 4) ເລືອກເຟັ້ນ ແລະ ນຳໃຊ້ສື່ການສອນທີ່ເໝາະ ສົມເພື່ອໃຫ້ການຮຽນຂອງນັກຮຽນບັນລຸຈຸດປະສົງສູງສຸດ, 5) ສອນບົດຮຽນໃຫ້ເປັນໜ້າສົນໃຈ ແລະ ມີຄວາມຕໍ່ເນື່ອງ ກັນໂດຍ ຖືການຮຽນຂອງຜູ້ຮຽນເປັນສຳຄັນ, 6) ນຳໃຊ້ວິທີ ວັດຜົນການຮຽນຂອງນັກຮຽນ ດ້ວຍຫຼາຍຮູບແບບ ແລະ ນຳເອົາຜົນດັ່ງກ່າວມາໃຊ້ໃນການວາງແຜນ, 7) ປະເມີນ ຄວາມກ້າວໜ້າຂອງນັກຮຽນໂດຍ ອີງໃສ່ສະມັດຖະພາບຂັ້ນ ພື້ນຖານດ້ານການຮຽນ ທີ່ໄດ້ກຳນົດໄວ້ ໃນຫຼັກສູດແຫ່ງ ຊາດ, 8) ບັນທຶກຜົນການຮຽນຂອງນັກຮຽນໄວ້ຢ່າງເປັນ ລະບົບ, 9) ຈັດຕັ້ງ ແລະ ຄຸ້ມຄອງຫ້ອງຮຽນຢ່າງມີປະສິດທິ ຜົນ ແລະ 10) ສ້າງໂອກາດໃຫ້ນັກຮຽນ ໄດ້ຮຽນຮູ້ດ້ວຍຕົນ ເອງທັງໃນ ແລະ ນອກໂມງຮຽນ ດັ່ງນັ້ນ, ໃນການພັດທະນາ ການສຶກສາໃຫ້ມີຄຸນນະພາບ ຈຶ່ງຕ້ອງອາໄສຄູທີ່ມີຄຸນ ນະພາບ ເພື່ອໃຫ້ຜູ້ຮຽນເກີດຂະບວນການຮຽນຮູ້ໃນຕົນເອງ , ມີການປ່ຽນແປງພຶດຕິກຳໄປໃນທາງທີ່ດີ ເຖິງຢ່າງໃດກໍ ຕາມ, ການສອນຂອງຄູແຕ່ລະຄົນຍັງຂຶ້ນກັບທັກສະ ແລະ ລັກສະນະຂອງຕົນເອງ ມີການພັດທະນາເທັກນິກວິທີ ແລະ ທັກສະຫຼາຍໆ ດ້ານມາປະສົມປະສານໃຫ້ເໝາະສົມສອດ ຄ່ອງ, ໃຊ້ເທັກນິກ ແລະ ທັກສະຫຼາຍດ້ານລວມກັບປະສົບ ການເພື່ອໃຫ້ເກີດການຮຽນຮູ້ ແລະ ມຸ່ງຈັດສັນການຮຽນຮູ້ ນັ້ນໄປໃນທິດທາງທີ່ດີ ແລະ ມີຄຸນນະທຳໃນສັງຄົມ. (ແຜນ ພັດທະນາສະມັດຖະພາບຂອງຄູ, 2007).

ເມືອງໂພນທອງ ມີເນື້ອທີ່ທັງໝົດ 2,041.87 ກມ$^2$, ມີພົນລະເມືອງທັງໝົດ 19,100 ຄົນ, ຍິງ 9,400 ຄົນ ໃນ ນັ້ນມີຊົນເຜົ່າລາວລຸ່ມ 895 ຄົນ, ຍິງ 469 ຄົນ, ກວມເອົາ 4.95%, ຊົນເຜົ່າກຶມມຸ 6,928 ຄົນ, ຍິງ 3,100 ຄົນ, ກວມ ເອົາ 34.81%, ຊົນເຜົ່າມົ້ງມີ 6,119 ຄົນ, ຍິງ 2,924 ຄົນ, ກວມເອົາ 33.78%, ເຜົ່າໄຕແອດ 2,776 ຄົນ, ຍິງ 1,475 ຄົນ ກວມເອົາ 15.37%, ເຜົ່າໄຕດຳມີ 1,088 ຄົນ, ຍິງ 508 ຄົນ ກວມເອົາ 6.02%, ແລະ ເຜົ່າໄຕແດງ 1,262 ຄົນ , ຍິງ 582 ຄົນ ກວມເອົາ 6.98% ສະແດງວ່າມີຫຼາຍຊົນເຜົ່າ ດຳລົງຊີວິດຮ່ວມກັນ. ດັ່ງນັ້ນ, ການໃຊ້ພາສາລາວຍ່ອມມີ ການໃຊ້ທີ່ຜິດພ້ຽນ ແລະ ພົບບັນຫາໃນການສື່ສານທາງ ພາສາໂດຍສະເພາະກໍຄືພາສາລາວ (ສະຖິຕິເມືອງໂພນທອງ, 2020).

ເມື່ອເຫັນໄດ້ເຖິງຄວາມສຳຄັນ ແລະ ຈຳເປັນຂອງ ການພັດທະນາບຸກຄະລາກອນທີ່ມີປະສິດທິພາບໃນການໃຊ້ ພາສາລາວເພື່ອການສື່ສານໃຫ້ຖືກຕ້ອງ ເໝາະສົມຕາມຫຼັກ

ໄວຍາກອນລາວ, ຕາມໜ່ວຍສຽງສຳນຽງເວົ້າ ແລະ ເພື່ອໃຫ້ເກີດຄວາມສະດວກໃນວົງສາຄະນາຍາດລາວ. ດັ່ງນັ້ນ, ຈຶ່ງເປັນເຫດຜົນທີ່ເຮັດໃຫ້ທີມງານວິໄຈມີຄວາມຕ້ອງການສຶກສາເຖິງ ພຶດຕິກຳການຈັດກິດຈະກຳ ແລະ ພຶດຕິກຳການຮ່ວມກິດຈະກຳຂອງຜູ້ຜູ້ເຂົ້າຮ່ວມ ໃນໂຮງຮຽນມັດທະຍົມສົມບູນ ເມືອງໂພນທອງ ແຂວງຫຼວງພະບາງ ຊຶ່ງຜົນຂອງການສຶກສາວິໄຈຄັ້ງນີ້ ຈະນຳມາໝູນໃຊ້ເປັນແນວທາງໃນການປັບປຸງ ແລະ ພັດທະນາພຶດຕິກຳການສອນຂອງຄູ ແລະ ພຶດຕິກຳການຮຽນຂອງນັກສຶກສາໃຫ້ມີປະສິດທິພາບ ເພື່ອເປັນການພັດທະນາຜູ້ຮຽນເຮັດໃຫ້ຜູ້ຮຽນເກີດມີຄວາມຮູ້ຄວາມເຂົ້າໃຈໃນວິຊາພາສາລາວ ສາມາດນຳຄວາມຮູ້ໄປນຳໃຊ້ໃນຊີວິດປະຈຳວັນ ແລະ ເຮັດໃຫ້ການຈັດກິດຈະກຳການຮຽນ-ການສອນພາສາລາວໄດຮັບຜົນດີ, ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສົ່ງເສີມໃຫ້ບຸກຄະລາກອນທາງການສຶກສາ ມີຄວາມສາມາດ, ມີຄວາມພ້ອມໃນການສື່ສານໃນສັງຄົມ ກໍຄືການໃຊ້ພາສາລາວທີ່ເປັນພາສາແຫ່ງຊາດຂອງຕົນໄດ້ຢ່າງໝັ້ນໃຈ, ຖືກຕ້ອງ ແລະ ຄ່ອງແຄ້ວ ແລະ ໃນການສ້າງຫຼັກສູດເຝິກອົບຮົມພາສາລາວສຳລັບການສື່ສານນີ້ຈະເປັນການສະໜອງຄວາມຕ້ອງການ ແລະ ຍັງເປັນການຊ່ວຍສະໜັບສະໜູນການປະຕິບັດງານຂອງບຸກຄະລາກອນຂອງໂຮງຮຽນດັ່ງກ່າວ.

ຈຸດປະສົງ:ເພື່ອສຶກສາພຶດຕິກຳ ແລະ ການມີສ່ວນຮ່ວມໃນການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

ການສຶກພຶດຕິກຳ ແລະ ການມີສ່ວນຮ່ວມຕໍ່ກັບການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2019-2020 ຄັ້ງນີ້ ຜູ້ວິໄຈໄດ້ໃຊ້ວິທີແບບປະສົມປະສານ (Mix Method) ຄື: ດ້ານປະລິມານ ແລະ ດ້ານຄຸນນະພາບທີ່ໄດ້ຈາກແບບສັງເກດ ແລະ ແບບສອບຖາມຂອງຜູ້ເຂົ້າຮ່ວມກິດຈະກຳ. ດັ່ງນັ້ນ, ຜູ້ວິໄຈໄດ້ມີວິທີການດຳເນີນການວິໄຈດັ່ງນີ້:

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍທີ່ນຳມາວິໄຈໃນຄັ້ງນີ້ແມ່ນພະນັກງານຄູສອນຂອງໂຮງຮຽນມັດທະຍົມສົມບູນໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2020-2021 ຈຳນວນ 23 ຄົນ. ໂດຍການເລືອກກຸ່ມຕົວຢ່າງແບບເຈາະຈົງ.

### 2.2 ເຄື່ອງມື ແລະ ການສ້າງເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ 2 ຊຸດຄື:

1. ແບບສັງເກດພຶດຕິກຳ ແລະ ການມີສ່ວນຮ່ວມກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2019-2020.

2. ແບບສອບຖາມກ່ຽວກັບພຶດຕິກຳ ແລະ ການມີສ່ວນຮ່ວມການກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2019-2020.

**ເຄື່ອງມືຊຸດທີ 1:** ແບບສັງເກດພຶດຕິກຳ ແລະ ການມີສ່ວນຮ່ວມກິດຈະກຳຜູ້ວິໄຈໄດ້ດຳເນີນການສ້າງ ແລະ ຫາຄຸນະພາບດັ່ງນີ້:

**ເຄື່ອງມືຊຸດທີ** 2: ແບບສອບຖາມກ່ຽວກັບພຶດຕິກຳ ແລະ ການມີສ່ວນຮ່ວມການກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2019 -2020.

### 2.3 ການເກັບຮວບຮວມຂໍ້ມູນ

ການເກັບກຳຂໍ້ມູນໃນຄັ້ງນີ້ ຜູ້ວິໄຈໄດ້ນຳໃຊ້ເອກະສານຕ່າງໆທີ່ໄດ້ກະກຽມໄວ້ແລ້ວລົງເກັບກຳຂໍ້ມູນໃນຊ່ວງເວລາລົງທົດລອງ ເຊິ່ງໄດ້ດຳເນີນໄປຕາມຂັ້ນຕອນດັ່ງນີ້:

1) ກະກຽມແຜນການຈັດກິດຈະກຳ, ແບບທົດສອບ ແລະ ແບບສອບຖາມ ໂດຍແບ່ງແບບທົດສອບ ແລະ ແບບສອບຖາມແມ່ນອີງຕາມຈຳນວນຂອງກຸ່ມເປົ້າໝາຍຈຳນວນ 23 ຄົນ.

2) ເມື່ອໄດ້ຮັບອະນຸຍາດແລ້ວ ກ່ອນຈະດຳເນີນການຈັດກິດຈະກຳ ຜູ້ວິໄຈໄດ້ນຳແບບທົດສອບກ່ອນຮຽນ ໄປທົດສອບເພື່ອເພື່ອວັດລະດັບຄວາມຮູ້ຂອງນັກສຶກສາກ່ອນຮຽນ.

3) ຜູ້ສອນນຳເຂົ້າສູ່ບົດຮຽນ, ແນະນຳປະເດັ່ນ ແລະ ຈຸດປະສົງທີ່ສອນ ພ້ອມດ້ວຍສິ່ງທີ່ຈະຮຽນ.

4) ຈາກນັ້ນດຳເນີນການຈັດກິດຈະກຳຕາມແຜນການສອນທີ່ສ້າງໄວ້ ແລະ ໃນຊ່ວງໄລຍະທີ່ຈັດກິດຈະກຳທາງຜູ້ວິໄຈໄດ້ດຳເນີນການສັງເກດ ຕາມເຄື່ອງມືທີ່ສ້າງໄວ້ກັບຜູ້ຮ່ວມກິດຈະກຳໄປພ້ອມ.

5) ຈັດກຸ່ມຜູ້ຮ່ວມກິດຈະກຳໂດຍແບ່ງກຸ່ມ ກຸ່ມລະ 5 ຫຼື 6 ຄົນ ເຊິ່ງລວມມີ 5 ກຸ່ມ ແລະ ແຈກຢາຍກິດຈະກຳກຸ່ມໃຫ້ແຕ່ລະກຸ່ມ. ຜູ້ຄົ້ນປະເມີນພຶດຕິກຳກຸ່ມໄປພ້ອມ.

6) ຫຼັງຈາກສຳເລັດການຈັດກິດຈະກຳຜູ້ວິໄຈໄດ້ນຳເອົາແບບສອບຖາມໄປທົດສອບກັບຜູ້ເຂົ້າຮ່ວມກິດຈະກຳທີ່ເລືອກເປັນກຸ່ມເປົ້າໝາຍຈຳນວນ 23 ຄົນ.

7) ເມື່ອຜູ້ເຂົ້າຮ່ວມກິດຈະກຳທຸກຄົນຕອບແບບສອບຖາມສຳເລັດແລ້ວ ຜູ້ວິໄຈເກັບແບບສອບຖາມຄືນໄດ້ຄົບຕາມຈຳນວນທີ່ຢາຍໃຫ້.

8) ກວດສອບຄວາມເປັນລະບຽບຮຽບຮ້ອຍຂອງແບບສັງເກດ ແລະ ແບບສອບຖາມເພື່ອນຳຂໍ້ມູນໄປດຳເນີນການວິເຄາະໃນຂັ້ນຕໍ່ໄປ.

## 2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນໃນຄັ້ງນີ້ ຜູ້ວິໄຈໄດ້ປະຕິບັດຕາມແບບສັງເກດ ແລະ ແບບສອບຖາມ ດັ່ງຂັ້ນຕອນດັ່ງລຸ່ມນີ້:

**ຕອນທີ 1:** ວິເຄາະຂໍ້ມູນກ່ຽວກັບຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມໄດ້ແກ່ ເພດ, ໂດຍການຫາຄ່າສ່ວນຮ້ອຍ ຜ່ານຕາຕະລາງປະກອບຄຳອະທິບາຍ.

**ຕອນທີ 2:**

- ວິເຄາະພຶດຕິກຳການສອນຂອງຄູຜ່ານການສັງເກດ, ທີມງານວິໄຈ ໄດ້ວິເຄາະຂໍ້ມູນຈາກການສັງເກດຮ່ວມໂມງຈັດກິດຈະກຳໃນຫ້ອງຮຽນ, ວິເຄາະຂໍ້ມູນຕາມເກນປະເມີນການສັງເກດແຕ່ລະເກນ ແມ່ນຫາຄ່າ ຜົນປ່ຽນມາດຕະຖານ (S.D) ແລະ ຄ່າສະເລ່ຍ ($\overline{x}$) ສະແດງຜົນຜ່ານຕາຕະລາງປະກອບຄຳອະທິບາຍ.

- ວິເຄາະຂໍ້ມູນກ່ຽວກັບພຶດຕິກຳການຮຽນຂອງກຸ່ມເປົ້າໝາຍ ໂດຍການຫາຄ່າສະເລ່ຍ ($\overline{x}$) ແລະ ຄ່າຜົນປ່ຽນມາດຕະຖານ (S.D). ແລ້ວສະແດງເປັນຕາຕະລາງ ປະກອບຄຳບັນຍາຍ ໂດຍອີງໃສ່ເກນໃນການແປຜົນ 5 ລະດັບ ຂອງບຸນຊົມ ສີສະອາດ

**ຕອນທີ 3:** ວິເຄາະຂໍ້ມູນກ່ຽວກັບຄວາມຄິດຄວາມເຫັນ ການມີສ່ວນຮ່ວມຂອງກຸ່ມເປົ້າໝາຍ ຕໍ່ກັບ ການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ ເຊິ່ງເປັນແບບສອບຖາມມາດຕາສ່ວນປະເມີນຄ່າ (Rating Scale) ເຊິ່ງແບ່ງອອກເປັນ 5 ລະດັບ, ວິເຄາະຂໍ້ມູນໂດຍການຫາຄ່າສະເລ່ຍ ($\overline{x}$) ແລະ ຄ່າຜົນປ່ຽນມາດຕະຖານ (S.D).

# 3. ຜົນໄດ້ຮັບ

ການສຶກສາພຶດຕິກຳ ແລະ ການມີສ່ວນຮ່ວມໃນການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2019-2020 ຄືວິທີການໃຫ້ຜູ້ເຂົ້າຮ່ວມກິດຈະກຳໄດ້ລົງມືປະຕິບັດກິດຈະກຳໃນການຮຽນຕາມຄວາມສາມາດຂອງຕົນ ແລະ ສົ່ງເສີມຄວາມຮ່ວມມືກັນພາຍໃນກຸ່ມເພື່ອພັດທະນາຫຼັກສູດການຈັດກິດຈະກຳຂອງຜູ້ວິໄຈ ເຊິ່ງຜົນທີ່ໄດ້ຮັບມີດັ່ງນີ້:

## 3.1 ພຶດຕິກຳການສອນຂອງຄູຜ່ານການສັງເກດ

ຜ່ານການດຳເນີນກິດຈະກຳສາມາດສະຫຼຸບໄດ້ວ່າ : ການສອນ ຫຼື ການດຳເນີນກິດຈະກຳຂອງຜູ້ສອນແມ່ນມີຄວາມເໝາະສົມຫຼາຍເປັນຕົ້ນແມ່ນ: ເນື້ອໃນບົດຮຽນທີ່ຄູນຳມາສອນມີຄວາມຊັດເຈນ, ມີປະໂຫຍດຄວນສຶກສາຮໍ່າຮຽນ, ມີການລຽງລຳດັບຢ່າງເໝາະສົມ, ມີຄວາມສອດຄ່ອງກັບຄວາມຮູ້ພື້ນຖານຂອງຜູ້ຮຽນ, ມີຄວາມເໝາະສົມກັບເວລາ. ດ້ານວິທີສິດສອນສາມາດສ້າງໃຫ້ຜູ້ຮຽນມີຄວາມເຂົ້າໃຈຕໍ່ບົດຮຽນຫຼາຍ, ຜູ້ຮຽນມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນ, ສ້າງໃຫ້ຜູ້ຮຽນກ້າສະແດງອອກ, ຜູ້ຮຽນໄດ້ສ້າງຜົນງານດ້ວຍຕົນເອງ, ສາມາດຮັບປະກັນດ້ານຄວາມຮູ້, ຄວາມຄິດ ແລະ ຄວນສາມາດໄດ້ດີ. ດ້ານກິດຈະກຳ, ມີຄວາມເໝາະສົມກັບເວລາ, ຊ່ວຍໃຫ້ຜູ້ຮຽນເກີດ

ການຄົ້ນຄິດ ແລະ ມີສ່ວນຮ່ວມໃນການວາງແຜນເຮັດວຽກເປັນກຸ່ມກັບໝູ່ເພື່ອນ, ເຮັດໃຫ້ຜູ້ຮຽນມີສ່ວນຮ່ວມໃນການວາງແຜນເຮັດວຽກເປັນກຸ່ມກັບໝູ່ເພື່ອນ, ການປະຕິບັດກິດຈະກໍາມີຄວາມສະດວກ ແລະ ເຂົ້າໃຈງ່າຍ. ດ້ານສະພາບແວດລ້ອມຊ່ວຍໃຫ້ຜູ້ຮຽນມີຄວາມສາມັກຄີກັນເກີດການຮຽນຮູ້ເຊິ່ງກັນ ແລະ ກັນ, ເຮັດໃຫ້ຜູ້ຮຽນໄດ້ສະແຫວງຫາຄວາມຮູ້ດ້ວຍຕົນເອງ, ມີການແລກປ່ຽນຄວາມຮູ້ ແລະ ປະສົບການໃໝ່ໆພາຍໃນກຸ່ມ, ມີສ່ວນຮ່ວມກິດຈະກໍາໄດ້ດີຂຶ້ນ. ດ້ານການວັດ ແລະ ປະເມີນຜົນມີຄວາມສອດຄ່ອງກັບໄວການຮັບຮູ້ຂອງຜູ້ຮຽນ, ມີການໃຊ້ເກນກໍານົດຢ່າງເໝາະສົມ, ຄູມີຄວາມຫຼາກຫຼາຍ. ດ້ານການນໍາໄປໃຊ້ສາມາດເຂົ້າໃຈຄວາມໝາຍຂອງການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ, ສາມາດໃຊ້ພາສາລາວເພື່ອການສື່ສານໄດ້, ນໍາເອົາຄວາມຮູ້ໄປໃຊ້ໃນຊີວິດປະຈໍາວັນໄດ້, ໃຫ້ຄໍາປຶກສາແກ່ໝູ່ເພື່ອນທີ່ຮຽນຮ່ວມກັນໄດ້, ນໍາເອົາຄວາມຮູ້ທີ່ໄດ້ຮັບໄປເຜີຍແຜ່ ຫຼື ຖ່າຍທອດໃຫ້ໝູ່ໄດ້. ໂດຍລວມສາມາດສະຫຼຸບຜົນໄດ້ວ່າ: ຄູຜູ້ສອນມີພຶດຕິກໍາທີ່ດີຕໍ່ກັບການຈັດກິດຈະກໍາການພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ເມືອງໂພນທອງ ແຂວງຫຼວງພະບາງ ຜ່ານການສັງເກດ ຢູ່ໃນລະດັບຫຼາຍໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$= 4.09, SD=0.64), ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

### 3.2 ພຶດຕິກໍາການຮຽນຂອງຜູ້ເຂົ້າຮ່ວມກິດຈະກໍາຜ່ານການສັງເກດ

ຜູ້ເຂົ້າຮ່ວມກິດຈະກໍາແຕ່ລະຄົນໃຫ້ຄວາມສົນໃຈດີ, ມີຄວາມຕັ້ງໃຈ, ມີລະບຽບວິໄນ, ມີນໍ້າໃຈເອື້ອເຟື້ອເພື່ອແຜ່, ຮັບຟັງຄວາມຄິດເຫັນຂອງກັນ ແລະ ກັນ ແລະ ມີຄວາມຕົງຕໍ່ເວລາ. ເຊິ່ງຜູ້ເຂົ້າຮ່ວມກິດຈະກໍາມີການປ່ຽນແປງພຶດຕິກໍາເຊັ່ນວ່າ: ການເວົ້າພາສາລາວຖືກຕ້ອງຕາມແບບແຜນການອອກສຽງ, ໃຊ້ພາສາລາວເພື່ອການແນະນໍາຕົນເອງຜູ້ອື່ນ, ເພື່ອໂຕ້ຕອບສົນທະນາ, ເພື່ອການຕ້ອນຮັບ, ເພື່ອການໂຕ້ຕອບຈົດໝາຍ, ເພື່ອການທັກທາຍ ອໍາລາ, ການດໍາເນີນຊີວິດປະຈໍາວັນ, ເພື່ອການສົນທະນາທາງໂທລະສັບ, ການສົນທະນາກ່ຽວກັບສຸຂະພາບ, ການສົນທະນາກ່ຽວກັບດິນຟ້າອາກາດ, ການສົນທະນາກ່ຽວກັບການທ່ອງທ່ຽວ, ການສົນທະນາກ່ຽວກັບການບັນເທີງ, ການສົນທະນາກ່ຽວກັບຊົນເຜົ່າຕ່າງໆໃນລາວ, ເພື່ອບອກທິດທາງ ຕໍາແໜ່ງຂອງສະຖານທີ່ໃນພາກເໜືອ, ເພື່ອອະທິບາຍໜ່ວຍງານຕ່າງໆໃນອາຊີບແຕ່ລະຢ່າງ, ການສື່ສານກັບຄົນຊົນເຜົ່າຕ່າງໆທີ່ເຂົ້າມາຫ້ອງການ, ກ່ຽວກັບການຈະລາຈອນ, ເພື່ອການກຽມຄວາມພ້ອມໃນການທັດສະນະເຂດຊຸມຊົນ, ເພື່ອການຈັດກິດຈະກໍາກັບນັກຮຽນຊົນເຜົ່າ, ເພື່ອການໃຊ້ອິນເຕີເນັດ, ເພື່ອການອ່ານຄູ່ມືວິທີໃຊ້ອຸປະກອນຕ່າງໆໃນການເຮັດວຽກ , ການເວົ້າໃນການສໍາມະນາການປະຊຸມ ແລະ ອະພິປາຍກຸ່ມຍ່ອຍ, ເພື່ອການເວົ້າສໍາລັບເຈົ້າພາບໃນທີ່ປະຊຸມ,ການຈັບໃຈຄວາມສໍາຄັນຈາກການສົນທະນາ, ການປະຊຸມກ່ຽວກັບວຽກ, ການຂຽນລາຍງານປະຕິບັດງານເປັນພາສາລາວ, ພາສາລາວເພື່ອການປະຊາສໍາພັນກັບຄົນຊົນເຜົ່າ. ໂດຍລວມສາມາດສະຫຼຸບຜົນໄດ້ດັ່ງນີ້: ຜູ້ເຂົ້າຮ່ວມກິດຈະກາມີພຶດຕິກໍາທີ່ດີຕໍ່ກັບການຈັດກິດຈະກໍາການພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ໂຮງຮຽນມັດທະຍົມສົມບູນເມືອງໂພນທອງ ແຂວງຫຼວງພະບາງ ຜ່ານການສັງເກດ ຢູ່ໃນລະດັບຫຼາຍໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$=3.96, SD=0.70), ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

### 3.3 ການມີສ່ວນຮ່ວມຂອງກຸ່ມເປົ້າໝາຍ ຕໍ່ກັບ ການຈັດກິດຈະກໍາ

ຜູ້ເຂົ້າຮ່ວມກິດຈະກໍາມີພຶດຕິກໍາທີ່ດີຕໍ່ກັບການຈັດກິດຈະກໍາການພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ໂຮງຮຽນມັດທະຍົມສົມບູນ ເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$=4.47, SD=0.54). ເມື່ອພິຈາລະນາເປັນດ້ານເຫັນວ່າ: ຜູ້ເຂົ້າຮ່ວມກິດຈະກໍາມີພຶດຕິກໍາທີ່ດີໃນລະດັບຫຼາຍທີ່ສຸດຕໍ່ດ້ານພຶດຕິກໍາການເຂົ້າຮ່ວມກິດຈະກໍາໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$= 4.54, SD= 0.53), ຮອງລົງມາ ຜູ້ເຂົ້າຮ່ວມກິດຈະກໍາມີພຶດຕິກໍາທີ່ດີໃນລະດັບຫຼາຍທີ່ສຸດແມ່ນ ດ້ານແຮງບັນດານໃຈໃນການເຂົ້າຮ່ວມກິດຈະກໍາ ໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$= 4.51, SD = 0.50), ຮອງລົງມາຜູ້ເຂົ້າຮ່ວມກິດຈະກໍາມີພຶດຕິກໍາທີ່ດີໃນລະດັບຫຼາຍ ຕໍ່ກັບ ດ້ານລະດັບຄວາມຮັບຜິດຊອບ, ດ້ານ

ພຶດຕິກຳທີ່ດີຕໍ່ການມີສ່ວນຮ່ວມໃນງານກິດຈະກຳ, ດ້ານພຶດຕິກຳທີ່ດີຕໍ່ການເຂົ້າຮ່ວມກິດຈະກຳໂດຍມີຄ່າສະເລ່ຍເທົ່າກັບ (($\bar{X}$= 4.47, SD= 0.54), ($\bar{X}$= 4.43, SD= 0.57), ($\bar{X}$= 4.39, SD= 0.56) ຕາມລຳດັບ. ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າຜູ້ເຂົ້າຮ່ວມມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ໂຮງຮຽນມັດທະຍົມສົມບູນເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍ, ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

## 4. ວິພາກຜົນ

1). ພຶດຕິກຳການສອນຂອງຄູຜ່ານການສັງເກດ ຕໍ່ກັບ ການຈັດກິດຈະກຳສາມາດສະຫຼຸບໄດ້ວ່າ : ການສອນ ຫຼື ການດຳເນີນກິດຈະກຳຂອງຜູ້ສອນແມ່ນມີຄວາມເໝາະສົມຫຼາຍເນື້ອໃນບົດຮຽນທີ່ຄູນຳມາສອນມີຄວາມຊັດເຈນມີປະໂຫຍດຄວນສຶກສາຮ່ຳຮຽນ ການປະຕິບັດກິດຈະກຳມີຄວາມສະດວກ ແລະ ເຂົ້າໃຈງ່າຍມີການແລກປ່ຽນຄວາມຮູ້ ແລະ ປະສົບການໃໝ່ໆພາຍໃນກຸ່ມ ແລະ ສາມາດນຳເອົາຄວາມຮູ້ໄປໃຊ້ໃນຊີວິດປະຈຳວັນໄດ້, ໂດຍສະຫຼຸບຜົນໄດ້ວ່າ: ຄູຜູ້ສອນມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານຂອງບຸກຄະລາກອນຄູທີ່ໂຮງຮຽນມັດທະຍົມສົມບູນເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍ, ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ເຊິ່ງມັນໄດ້ສອດຄ່ອງກັບງານວິໄຈຂອງ (Khamtha, 2558) ໄດ້ສຶກສາເລື່ອງ A study of the Relation between Teaching Behaviors of teacher and Learning Behavior of Students Faculty of Business Administration at Thai-Nichi Institute of Technology ຜົນການວິໄຈພົບວ່າ: ພຶດຕິກຳການສອນຂອງອາຈານ ຄະນະບໍລິຫານທຸລະກິດ ສະຖາບັນເທັກໂນໂລຍີ ໄທ-ຍີ່ປຸ່ນ ໂດຍພາບລວມ ແລະ ລາຍດ້ານຢູ່ໃນລະດັບຫຼາຍໂດຍລຽງຕາມຄ່າແຕ່ຫຼາຍໄປຫາໜ້ອຍດັ່ງນີ້: ດ້ານການກຽມການສອນ, ດ້ານບັນຍາກາດໃນຫ້ອງຮຽນ, ດ້ານການຈັດການຮຽນ-ການສອນ ແລະ ດ້ານການວັດ ແລະ ການປະເມີນ. ຍັງສອດຄ່ອງກັບງານວິ ໄຈຂອງ (Khajonrit, 2550) ໄດ້ສຶກສາວິໄຈເລື່ອງ ພຶດຕິກຳການສອນພາສາອັງກິດໂດຍຄູຄົນຕ່າງຊາດຕາມຄວາມຄິດເຫັນຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນໃນໂຮງຮຽນເອກະຊົນເຂດເມືອງພັດທະຍາພົບວ່າ: ພຶດຕິກຳການສອນວິຊາພາສາອັງກິດໂດຍຄູຄົນຕ່າງຊາດຕາຄວາມຄິດເຫັນຂອງນັກຮຽນລະດັບມັດທະຍົມຕອນຕົ້ນໃນໂຮງຮຽນເອກະຊົນເຂດເມືອງພັດທະຍາໂດຍລວມມີການປະຕິບັດຢູ່ໃນລະດັບຫຼາຍ ເມື່ອພິຈາລະນາລາຍດ້ານພົບວ່າ: ທຸກດ້ານຢູ່ໃນລະດັບຫຼາຍຄື: ດ້ານການກຽມການສອນ, ການຈັດກິດຈະກຳ, ການຮຽນ-ການສອນ, ການໃຊ້ສື່ການຮຽນ-ການສອນ, ການສ້າງບັນຍາກາດໃນຊັ້ນຮຽນ, ການວັດ ແລະ ປະເມີນຜົນ

2). ພຶດຕິກຳການຮຽນຂອງຜູ້ເຂົ້າຮ່ວມກິດຈະກຳຜ່ານການສັງເກດ ຜູ້ເຂົ້າຮ່ວມກິດຈະກຳແຕ່ລະຄົນໃຫ້ຄວາມສົນໃຈດີ, ມີຄວາມຕັ້ງໃຈ, ມີລະບຽບວິໄນ, ມີນ້ຳໃຈເອື້ອເຟື້ອເພື່ອແຜ່, ຮັບຟັງຄວາມຄິດເຫັນຂອງກັນ ແລະ ກັນ ແລະ ມີຄວາມຕົງຕໍ່ເວລາ. ເຊິ່ງຜູ້ເຂົ້າຮ່ວມກິດຈະກຳມີການປ່ຽນແປງພຶດຕິກຳເຊັ່ນ: ການເວົ້າພາສາລາວຖືກຕ້ອງຕາມແບບແຜນການອອກສຽງສາມາດໃຊ້ພາສາລາວເພື່ອການແນະນຳຕົນເອງຜູ້ອື່ນ, ເພື່ອໂຕ້ຕອບສົນທະນາ, ໂດຍສະຫຼຸບຜົນໄດ້ວ່າ: ຜູ້ເຂົ້າຮ່ວມກິດຈະກາມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ໂຮງຮຽນມັດທະຍົມສົມບູນ ເມືອງໂພນທອງ ແຂວງຫຼວງພະບາງ ຜ່ານການສັງເກດ ຢູ່ໃນລະດັບຫຼາຍ ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ເຊິ່ງມັນໄດ້ສອດຄ່ອງກັບງານວິໄຈຂອງ (Khamtha, 2558) ໄດ້ສຶກສາເລື່ອງ A study of the Relation between Teaching Behaviors of teacher and Learning Behavior of Students Faculty of Business Administration at Thai-Nichi Institute of Technology ຜົນການວິໄຈພົບວ່າ: ໂດຍລວມນັກສຶກສາມີພຶດຕິກຳການຮຽນຢູ່ໃນລະດັບຫຼາຍ ເມື່ອພິຈາລະນາລາຍດ້ານພົບວ່າ: ພຶດຕິກຳການຮຽນຂອງນັກສຶກສາຢູ່ໃນລະດັບຫຼາຍທັງ 2 ດ້ານໂດຍລຽງຕາມຄ່າແຕ່ຫຼາຍຫາໜ້ອຍດັ່ງນີ້ ດ້ານພຶດຕິກຳການຮຽນພາຍນອກ ແລະ ດ້ານພຶດຕິກຳການຮຽນພາຍໃນ ອາດເປັນເພາະນັກສຶກສາສ່ວນໃຫຍ່ທີ່ເຂົ້າມາຮຽນໃນສະຖາບັນເທັກໂນໂລຍີ ໄທ-ຍີ່ປຸ່ນ ໄດ້ເລືອກຮຽນໃນຫຼັກສູດທີ່ຕົນເອງສົນໃຈ ແລະ ຕາມຄວາມຖະນັດ

ຂອງຕົນເອງ, ມີເປົ້າໝາຍໃນການຮຽນທີ່ຊັດເຈນ ເຊັ່ນ ຢາກໄປເຮັດວຽກຢູ່ປະເທດຍີ່ປຸ່ນ, ຢາກຮຽນຕໍ່ທີ່ປະເທດຍີ່ປຸ່ນ, ຢາກເຮັດວຽກກັບບໍລິສັດຍີ່ປຸ່ນ ເປັນຕົ້ນ ຈຶ່ງເຮັດໃຫ້ນັກສຶກສາທີ່ເຂົ້າມາຮຽນກໍ່ເພື່ອສຶກສາຫາຄວາມຮູ້, ເພື່ອໃຫ້ບັນລຸເປົ້າໝາຍຂອງຕົນເອງ ແລະ ຍັງສອດຄ່ອງກັບງານວິໄຈຂອງ (Sirisompan & Mahakhalan, 2554) ໄດ້ສຶກສາວິໄຈເລື່ອງການສຶກສາພຶດຕິກຳການຮຽນຂອງນັກສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ສີລະປະກອນ ພົບການວິໄຈພົບວ່າ: ນັກສຶກສາມີພຶດຕິກຳການຮຽນເໝາະສົມຂ້ອນຂ້າງຫຼາຍ ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ ພຶດຕິກຳການຮຽນຫຼາຍທີ່ສຸດຂອງນັກສຶກສາດ້ານການຮອບຮອມຂໍ້ມູນ ແລະ ກະຕືລືລົ້ນໃນການຫາຄວາມຮູ້ ແລະ ມີພຶດຕິກຳໜ້ອຍທີ່ສຸດດ້ານທັດສະນະຄະຕິໃນການຮຽນ

3). ການມີສ່ວນຮ່ວມຂອງກຸ່ມເປົ້າໝາຍ ຕໍ່ກັບການຈັດກິດຈະກຳ ຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ໂຮງຮຽນມັດທະຍົມສົມບູນ ເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍ ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ເນື່ອງຈາກວ່າການຈັດກິດຈະກຳດັ່ງກ່າວເປັນການເຮັດໃຫ້ຜູ້ເຂົ້າຮ່ວມກິດຈະກຳໄດ້ລົງມືປະຕິບັດກິດຈະກຳໃນການຮຽນຕາມຄວາມສາມາດຂອງຕົນ ແລະ ສົ່ງເສີມຄວາມຮ່ວມມືກັນ ແລະ ສາມາດພັດທະນາເລື່ອງການໃຊ້ພາສາລາວເພື່ອການສື່ສານໄດ້ຢ່າງຖືກຕ້ອງ ເໝາະສົມກັບກາລະເທສະເຊັ່ນວ່າ: ການໃຊ້ພາສາລາວໃຫ້ຖືກຕ້ອງຕາມຫຼັກໄວຍາກອນລາວ, ຖືກຕາມຫຼັກການປາກເວົ້າ, ການຂຽນ ແລະ ທັກສະອື່ນໆທີ່ກ່ຽວຂ້ອງກັບພາສາລາວ. ເຊິ່ງສອດຄ່ອງກັບງານວິໄຈຂອງ (Papkhet, 2547) ສຶກສາເລື່ອງການມີສ່ວນຮ່ວມຂອງນັກສຶກສາໃນກິດຈະກຳນັກສຶກສາ ພົບວ່າ: ນັກສຶກສາມີສ່ວນຮ່ວມໃນກິດຈະກຳນັກສຶກສາຫຼາຍທີ່ສຸດໃນດ້ານສິລະປະວັດທະນະທຳ ທັ້ງນີ້ເນື່ອງຈາກ ນັກສຶກສາສ່ວນຫຼາຍມີຄວາມສົນໃຈໃນເລື່ອງຂອງການສະແດງອອກທາງການສະແດງດົນຕີ ເຊິ່ງຖືວ່າເປັນກິດຈະກຳທາງດ້ານສິລະປະວັດທະນະທຳ. ແລະ ຍັງສອດຄ່ອງກັຍງານວິໄຈຂອງ (Kanjanakoun, Niphon, 2548) ເຊິ່ງເພິ່ນສຶກສາເລື່ອງປັດໃຈທີ່ສົ່ງຜົນຕໍ່ການມີສ່ວນຮ່ວມກິດຈະກຳຂອງນັກສຶກສາ ມະຫາວິທະຍາໄລລາດຊະພັດ ພູເກັດ ຜົນການວິໄຈພົບວ່າ: ລະດັບການມີສ່ວນຮ່ວມກິດຈະກຳຂອງນັກສຶກສາມະຫາວິທະຍາໄລລາດຊະພັດພູເກັດ ໂດຍພາບລວມ ແລະ ລາຍດ້ານ ຢູ່ໃນລະດັບປານກາງ ນັກສຶກສາມີສ່ວນຮ່ວມກັບກິດຈະກຳທີ່ນັກສຶກສາສົນໃຈ ແລະ ມີເວລາຫວ່າງກົງກັບເວລາຈັດກິດຈະກຳ. ນອກຈາກນີ້, ການມີສ່ວນຮ່ວມຍັງຂຶ້ນຢູ່ກັບການສະນັບສະໜູນຊັບພະຍາກອນ ແລະ ສິ່ງອຳນວຍຄວາມສະດວກ ຈາກການສຶກສາຄວາມສຳພັນລະຫວ່າງປັດໃຈດ້ານນັກສຶກສາ ແລະ ປັດໃຈດ້ານສະຖາບັນກັບການມີສ່ວນຮ່ວມກິດຈະກຳຂອງນັກສຶກສາມະຫາວິທະຍາໄລລາດຊະພັດພູເກັດ ພົບວ່າ ປັດໃຈດ້ານນັກສຶກສາໄດ້ແກ່ດ້ານເຈຕະຄະຕິຕໍ່ກິດຈະກຳນັກສຶກສາ, ດ້ານທີ່ພັກອາໄສ ແລະ ດ້ານລາຍໄດ້ ແລະ ປັດໃຈດ້ານສະຖາບັນໄດ້ແກ່ ດ້ານລັກສະນະຂອງການຈັດກິດຈະກຳ, ດ້ານນະໂຍບາຍ ແລະ ກົດລະບຽບຂອງສະຖາບັນ ແລະ ດ້ານການສະນັບສະໜູນຊັບພະຍາກອນ ແລະ ສິ່ງອຳນວຍຄວາມສະດວກສາມາດທຳນາຍການມີສ່ວນຮ່ວມ ກິດຈະກຳຂອງນັກສຶກສາໄດ້ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.01

## 5. ສະຫຼຸບ

ຈາກການສຶກສາວິໄຈກ່ຽວກັບພຶດຕິກຳ ແລະ ການມີສ່ວນຮ່ວມໃນການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ມັດທະຍົມສົມບູນ ເມືອງໂພນທອງ ແຂວງຫຼວງພະບາງ ພົບວ່າ: ເພດຍິງຫຼາຍກວ່າເພດຊາຍ, ໃນນັ້ນ ຫຼາຍກວ່າໝູ່ແມ່ນຜູ້ມີອາຍລະຫວ່າງ 20-30 ປີ, ເຫັນວ່າຢູ່ໃນຊ່ຳອາຍຸທີ່ພ້ອມມີການພັດທະນາໃນທັກສະນີ້ໄດ້ດີ. ຄູຜູ້ສອນມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການສອນ ການໃຊ້ພາສາລາວ ເພື່ອການສື່ສານ ຂອງບຸກຄະລາກອນ ທີ່ໂຮງຮຽນມັດທະຍົມສົມບູນ ເມືອງໂພນທອງ ແຂວງຫຼວງພະບາງ ຜ່ານການສັງເກດ ຢູ່ໃນລະດັບຫຼາຍ, ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ຜູ້ເຂົ້າຮ່ວມກິດຈະກຳມີໂອກາດສ້າງປະຕິສຳພັນກັບໝູ່ເພື່ອນ, ຄູອາຈານ ແລະ ສະພາບແວດລ້ອມອ້ອມຕົວຕະຫຼອດຈົນສາມາດສ້າງອົງຄວາມຮູ້ໄດ້ດ້ວຍຕົນເອງນຳເອົາຄວາມຮູ້ທີ່ໄດ້ຮຽນມາໄປປະຍຸກໃຊ້ໃນຊີວິດ

ຕົວຈິງໄດ້.

## 7. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Beerthong, S., & board. (2019). *study the achievement of learning Thai language using TAI technique cooperative learning group of 5th grade elementary students.* Thesis Program in Elementary Education, Faculty of Education, Royal University of Kamphang Phet.

Holanouphab, S. (2005). *Lao language used by the Faculty of Letters.* Department of Lao Language - Media, National University.

Niphon, K. (2548). *Factors Affecting the Participation of students in the Activities of Rajapat University.* Phuket Education Administration. Phuket University.

Khajonrit, B. (2550). *English teaching behavior by foreign teachers according to the opinion of middle school students in private schools in Phatthaya district.* Master's Degree Thesis, Department of Curriculum and Teaching, Faculty of Education, Bura Pha University.

Khamtha, J. K. (2558). A study of the relationship between teacher's teaching behavior and student's learning behavior Faculty of Business Administration Thailand-Japan Institute of Technology Veridian. *E-Journal, Silpakorn University ISSN 1906 – 3431 Department of Humanities, Sociology and Arts Year 8*(2).

Papkhet, S. (2547). *Student participation in student activities: a case study of Sirithon College of Public Health, Trang Trang.* Sirithon University of Public Health, Trang Trang.

Sansuk, K. (2005). *General Education for the Faculty of Education.* Vientiane: National University.

Sidaphon, S., & Chanthahong, K. (2016). *Teaching method of Lao language - literature for 3rd year students of Faculty of Education, Suphanu Vong University.*

Sirisompan, O., & Mahakhalan, P. (2554). Study of learning behavior of students. *Faculty of Education, University of the Arts, Veridian E-Journal, Humanities and Social Sciences Group 2014. Issue 4 (September - December).*

Sisuwan, P. (2000). *Current Lao Grammar.* Ministry of Education, National Education Research Institute.

Viravong, S. (1952). *Lao Grammar.* Part 2 Morphology of the Royal Dictionary of the Ministry of Education.

Vongvichit, P. (1991). *Lao Grammar.* 2nd edition published by the Central Office of the Lao Patriotic Front.